ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ......05....../ນຍ
ນະຄອນຫຼວງວຽງຈັນ, ວັນທີ... 21/05/2019.

# ຄໍາສັ່ງ
# ວ່າດ້ວຍການສ້າງແຜນພັດທະນາເສດຖະກິດ-ສັງຄົມ
# ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

ເຖິງ: ບັນດາ ທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ລັດຖະທໍາມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016.
- ອີງຕາມ ຄວາມຮຽກຮ້ອງຕ້ອງການໃນການກະກຽມເນື້ອໃນຮັບໃຊ້ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ.

## ນາຍົກລັດຖະມົນຕີ ອອກຄໍາສັ່ງ:

ໃຫ້ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາ ເຈົ້າແຂວງໃນທົ່ວປະເທດ ຄົ້ນຄວ້າສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ແຜນພັດທະນາ 5 ປີ ຂອງຂະແໜງການ ແລະ ທ້ອງຖິ່ນຕົນ ເພື່ອກະກຽມເນື້ອໃນຮັບໃຊ້ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ສໍາເລັດຕາມຈຸດປະສົງ ແລະ ທັນຕາມກໍານົດເວລາ ໂດຍໃຫ້ເອົາໃຈໃສ່ບາງເນື້ອໃນສໍາຄັນ ດັ່ງຕໍ່ໄປນີ້:

I. ຈຸດປະສົງ, ລະດັບຄາດໝາຍ ແລະ ຄວາມໝາຍສໍາຄັນ:

- ຈຸດປະສົງ, ລະດັບຄາດໝາຍ: ເພື່ອແຈ້ງທິດທາງ, ເປົ້າໝາຍ, ຄາດໝາຍລວມ ແລະ ວຽກງານບູລິມະສິດຕົ້ນຕໍ ຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ໃນທົ່ວປະເທດ ມີຄວາມເຂົ້າໃຈເປັນເອກະພາບ ແລະ ນໍາໄປຈັດຕັ້ງຜັນຂະຫຍາຍເຂົ້າໃນການສ້າງແຜນພັດທະນາ 5 ປີ ຂອງ ຂະແໜງການ ແລະ ທ້ອງຖິ່ນຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.
- ຄວາມໝາຍສໍາຄັນ: ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ເປັນແຜນ ສືບຕໍ່ຜັນຂະຫຍາຍຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ, ວິໄສທັດ ຮອດປີ 2030 ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025), ທັງເປັນແຜນສ້າງບາດລ້ຽວໃໝ່ການຫັນ ປ່ຽນໂຄງສ້າງຂອງເສດຖະກິດຈາກການຜະລິດແບບດັ້ງເດີມໄປສູ່ໂຄງສ້າງເສດຖະກິດທີ່ທັນສະໄໝ, ມີຄຸນນະພາບ, ສົມດຸນ ແລະ ຍືນຍົງ ເພື່ອເປັນພື້ນຖານໜັກແໜ້ນໃຫ້ແກ່ເສດຖະກິດແຫ່ງຊາດ ຕາມທິດເຕີບໂຕສີຂຽວ ແລະ ຍືນຍົງ ພ້ອມທັງເປັນ ການກະກຽມເນື້ອໃນພື້ນຖານໃຫ້ບົດລາຍງານການເມືອງ ຂອງກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ.